

ການສະແຫວງຫາລັກສະນະຊີວິດ



ໂດຍ: ອາຈານ ເດເຣັກ ປຣິນຊ

ເມື່ອເຮົານຶກເຖິງເມືອງໃຫຍ່ໆເຊັ່ນ: ເມືອງໄມອາມີເຮົາຈະບອກວ່າມີຄຣິສຕະຈັກທີ່ຫຼາກຫຼາຍ ໃນເມືອງນີ້ ແຕ່ຂ້າພະເຈົ້າບໍ່ຄິດວ່າພຣະເຈົ້າຈະຊົງທອດພຣະເນດເຫັນເຊັ່ນນັ້ນ, ຂ້າພະເຈົ້າ ເຊື່ອວ່າພຣະເຈົ້າຊົງທອດພຣະເນດເຫັນພຽງຄຣິສຕະຈັກດຽວ ເພາະສຸດທ້າຍແລ້ວ ໃນໜັງສື ພຣະນິມິດໄດ້ບອກກັບເຮົາວ່າ, ພຣະເຢຊູຈະຊົງສົມລົດກັບຄຣິສຕະຈັກ ຫຼືເຈົ້າສາວຂອງພຣະອົງ ແລະ
ຂ້າພະເຈົ້າກໍບໍ່ເຊື່ອວ່າພຣະເຢຊູຈະຊົງເປັນຜູ້ທີ່ມີຄຸ່ສົມລົດຫຼາຍຄົນ ພຣະອົງຊົງສົມລົດກັບ ຄຣິສຕະຈັກດຽວເທົ່ານັ້ນ. ດັ່ງນັ້ນ, ເຮົາອາດຈະນຶກເຖິງຄຣິສຕະຈັກຕ່າງໆ ຢ່າງຫຼວງຫຼາຍແຕ່ ພຣະເຈົ້າຊົງທອດພຣະເນດເຫັນຄຣິດຕະຈັກພຽງຄຣິສຕະຈັກດຽວ. ເມື່ອໂປໂລຂຽນຈົດໝາຍ ຝາກທ່ານບໍ່ໄດ້ຂຽນເຖິງ ຄຣິສຕະຈັກບັບຕິສ (Baptist Church) ໃນເມືອງໂກຣິນ ຫຼື ຄຣິສຕະຈັກໂອເພິນໄບເບິ້ນ (Open Bible Church) ໃນກຸງໂຣມ ຫຼືຄຣິສຕະຈັກ ອີແວນເຈລິຄ໋ລ (Evangelical Church) ໃນເມືອງເອເຟໂຊ ແຕ່ທ່ານຂຽນເຖິງຄຣິສຕະຈັກ ໃນເມືອງນັ້ນໆສະເໝີ
(ເຊິ່ງໝາຍເຖິງຄຣິສຕະຈັກດຽວຂອງພຣະຄຣິດ - ຜູ້ແປ) ທຸກວັນນີ້ ເຮົາປ່ຽນແປງໄປໄກຈາກຈຸດນັ້ນຫຼາຍ ແຕ່ຂ້າພະເຈົ້າບໍ່ເຊື່ອວ່າພຣະເຈົ້າຈະຊົງເຄີຍປ່ຽນ ພຣະໄທຂອງພຣະອົງ.

ດັ່ງນັ້ນ, ຂ້າພະເຈົ້າ ເຊື່ອວ່ານີ້ເປັນສິ່ງສຳຄັນ ທີ່ຜູ້ນຳຄຣິສຕຽນມີການປະຊຸມຮ່ວມກັນ ໃນຄຣິສຕະຈັກພາຍໃນເມືອງ ຫຼືພາກພື້ນນັ້ນໆ, ຈະຕ້ອງຮູ້ວິທີສ້າງສາຍສຳພັນເຊິ່ງກັນ ແລະກັນ, ເປັນເລື່ອງງ່າຍຫຼາຍທີ່ຈະມີການເອົາຕົນເອງເປັນສູນກາງກໍ່ຄື ຄິດເຖິງພຽງແຕ່ "ຄຣິສຕະຈັກຂອງຕົວເອງ" ເທົ່ານັ້ນ ແລະມຸ່ງຄວາມສົນໃຈໄປສິ່ງນັ້ນພຽງສິ່ງດຽວ ແຕ່ນັ້ນ ບໍ່ແມ່ນທັດສະນະຄະຕິຕາມແບບພຣະຄຳພີ, ຂ້າພະເຈົ້າ ເຊື່ອວ່າເຮົາຄວນເບິ່ງເຫັນກັນ ແລະ ກັນ ໃນຖານະຜູ້ປົກຄອງຮ່ວມພາຍໃຕ້ຄຣິສຕະຈັກດຽວກັນ ໜຶ່ງໃນອົງປະກອບທີ່ສຳຄັນ ທີ່ສຸດຂອງລັກສະນະຊີວິດຄຣິສຕຽນຈະຖືກເປີດເຜີຍອອກມາໂດຍການຖາມຕົວເອງວ່າ ໄມ້ກາງແຂນມີບົດບາດແນວໃດໃນຊີວິດຂອງເຮົາແຕ່ລະຄົນ ໃນຄາລາເຕຍ2:20 ໂປໂລ ໄດ້ອາງມາດຕະຖານເອົາໄວ້ວ່າ:

> “ເຮົາຈຶ່ງບໍ່ມີຊີວິດຢູ່ ແຕ່ແມ່ນພຣະຄຣິດທີ່ຊົງມີຊີວິດຢູ່ໃນເຮົາ.” (ພຄສ 2015)

ຂ້າພະເຈົ້າໄດ້ຖາມຕົວເອງວ່າສິ່ງນັ້ນເປັນຈິງ ໃນຊີວິດຂອງຂ້າພະເຈົ້າຫຼືບໍ່ເພາະນັ້ນຄື ການປົກປ້ອງພຽງຢ່າງດຽວ ຄາລາເຕຍ5:24 ໂປໂລໄດ້ກ່າວຕໍ່ໄປວ່າ:

ລິຂະສິດ © 2005 ພັນທະກິດ ເດເຣັກ ປຣິນຊ

> “ສ່ວນພວກທີ່ຢູ່ໃນພຣະເຢຊູຄຣິດເຈົ້ານັ້ນ ກໍໄດ້ເອົາຄວາມປາຖະໜາ ກັບກິເລດຕັນຫາຂອງສັນດານມະນຸດຄຶງໄວ້ທີ່ໄມ້ກາງແຂນ.” (ພຄສ2015)

ແລະນັ້ນຄື ຄຳອະທິບາຍທີ່ກ່າວເຖິງຜູ້ທີ່ເປັນຂອງພຣະຄຣິດຢ່າງແທ້ຈິງ ຄຳອະທິບາຍນັ້ນ ບໍ່ໄດ້ບອກວ່າພວກເຂົາຢູ່ໃນຄຣິສຕະຈັກໂອເພິນໄບເບິ້ນ (Open Bible Church) ຫຼື ເປັນບັບຕິສ ຫຼື ເພຣສບີເຕີຣຽນ ຫຼື ກາໂຕລິກ ເຄື່ອງໝາຍດຽວຂອງຜູ້ທີ່ເປັນຂອງ ພຣະຄຣິດຢ່າງແທ້ຈິງກໍຄື ພວກເຂົາໄດ້ຄຶງເນື້ອໜັງຂອງຕົນໄວ້ທີ່ໄມ້ກາງແຂນແລ້ວ.

ໃນໂຣມ 6:6 ໂປໂລກ່າວວ່າ: "ຊີວິດເກົ່າຂອງພວກເຮົານັ້ນໄດ້ຖືກຄຶງໄວ້ກັບພຣະອົງແລ້ວ." ນັ້ນຄືສິ່ງທີ່ພຣະເຈົ້າກະທຳ ແຕ່ໃນຄາລາເຕຍ 5:24 ໂປໂລກ່າວວ່າ: ນີ້ເປັນສິ່ງທີ່ທ່ານຕ້ອງ ປະຕິບັດຄື: ເຈົ້າຕ້ອງຕອກຕະປູ ຄຶງທຳມະຊາດເນື້ອໜັງຂອງເຈົ້າເອງ ແລະ ການຖືກຄຶງນັ້ນ ເຈັບປວດສະເໝີບໍ່ມີການຖືກຄຶງໃດທີ່ບໍ່ເຈັບປວດ.

ມາດຕະຖານຂອງພຣະເຈົ້າ

ເມື່ອເຮົາໄດ້ຍອມຮັບຄວາມຈິງແລ້ວວ່າ, ລັກສະນະຊີວິດເຊັ່ນນັ້ນຈະເກີດຂຶ້ນໄດ້ ໂດຍຜ່ານທາງ ໄມ້ກາງແຂນເທົ່ານັ້ນ, ໃຫ້ເຮົາມາເບິ່ງພາບຂອງລັກສະນະຊີວິດທີ່ ພຣະເຈົ້າຊົງຄາດຫວັງນຳກັນ ສິ່ງນີ້ມີບັນທຶກໃນເພງສັນລະເສີນບົດທີ15

> “ຂ້າແດ່ພຣະເຈົ້າຢາເວ ຜູ້ໃດຈະເຂົ້າໄປໃນພຣະວິຫານຂອງພຣະອົງໄດ້? ຜູ້ໃດ
> ຈະນະມັດສະການທີ່ຊີໂອນ ເນີນພູສັກສິດຂອງພຣະອົງນັ້ນໄດ້.
> ຄືພວກທີ່ເຊື່ອ ພຣະເຈົ້າໃນທຸກສິ່ງ ແລະເຮັດໃນສິ່ງທີ່ຖືກຕ້ອງຢູ່ສະເໝີ
> ທັງເປັນຄົນເວົ້າຄວາມ ຈິງຈາກຈິດໃຈດ້ວຍ ແລະ
> ເປັນຜູ້ທີ່ບໍ່ເວົ້າໃຫ້ຄົນອື່ນແບບເສຍຫາຍ ບໍ່ເຮັດຜິດ ຕໍ່ຫມູ່ຄູ່ ແລະ
> ບໍ່ກ່າວຂ້ອນນິນທາເພື່ອນບ້ານ. ລາວດູຖູກຄົນທີ່ພຣະເຈົ້າປະຕິ ເສດເຂົາ
> ແຕ່ໃຫ້ກຽດຄົນທີ່ຢຳເກງພຣະເຈົ້າຢາເວ. ລາວເຮັດຕາມທີ່ຕົນໄດ້
> ສັນຍາໄວ້ສະເໝີເຖິງວ່າຕົນເປັນຝ່າຍເສຍປະໂຫຍດກໍ່ຕາມ.
> ລາວໃຫ້ຄົນຢືມເງິນ ໂດຍບໍ່ຄິດດອກເບ້ຍ
> ທັງບໍ່ຮັບສິນບົນເປັນພະຍານຕໍ່ສູ້ຄົນບໍ່ມີຄວາມຜິດດ້ວຍ. ຜູ້ທີ່ປະຕິບັດຕາມ
> ດັ່ງທີ່ກ່າວມານີ້ກໍ່ຈະໄດ້ຮັບຄວາມຫມັ້ນຄົງຕະຫຼອດໄປ.”

ຂໍ້ທຳອິດຂອງພຣະຄຳພີໃນບົດນີ້ເປັນຄຳຖາມ ແລະເພງສັນລະເສີນ ທີ່ເຫຼືອແມ່ນເປັນຄຳຕອບ, ດາວິດໄດ້ລະບຸລັກສະນະເຈັດປະການຂອງຜູ້ທີ່ຈະອາໄສຢູ່ ໃນພູເຂົາບໍຣິສຸດຂອງພຣະເຈົ້າເອົາໄວ້ ຫາກເຮົາຈະໄປທີ່ນັ້ນ ເຮົາຈຳເປັນຕ້ອງ ມີຄຸນລັກສະນະເຫຼົ່ານັ້ນ, ໃຫ້ເຮົາມາເບິ່ງປະເດັນເຫຼົ່ານີ້ ກ່ຽວກັບບຸກຄົນທີ່ຈະອາໄສຢູ່ໃນ ພູເຂົາບໍຣິສຸດຂອງພຣະເຈົ້າ ແລະຂໍໃຫ້ຈຳໄວ້ວ່າສິ່ງເຫຼົ່ານີ້ ເກີດຂຶ້ນໄດ້ໂດຍພຣະຄຸນ ຄືພຣະຄຸນເອງທີ່ເຮັດໃຫ້ເກີດຜົນສຳເລັດ.

ຜູ້ທີ່ເຊື່ອພຣະເຈົ້າໃນທຸກສິ່ງ ການກະທຳຂອງເຂົາຖືກຕ້ອງໃນສາຍພຣະເນດຂອງພຣະເຈົ້າ

ຜູ້ທີ່ເຮັດສິ່ງທີ່ຖືກຕ້ອງຢູ່ສະເໝີ ທັງເປັນຄົນເວົ້າຄວາມຈິງຈາກໃຈ ເຂົາບໍ່ພຽງແຕ່ ເວົ້າສັ່ງສອນເທົ່ານັ້ນ ແຕ່ເຂົາຍັງປະຕິບັດຕາມສິ່ງທີ່ເຂົາເວົ້າອີກດ້ວຍ "ເຂົາເວົ້າຄວາມຈິງ ຈາກສິ່ງທີ່ຢູ່ໃນໃຈ" ສິ່ງທີ່ອອກຈາກປາກຄືສິ່ງທີ່ຢູ່ໃນໃຈຂອງເຂົາ, ເຂົາບໍ່ແມ່ນຄົນປາກຢ່າງ ແລະໃຈຄິດອີກຢ່າງ.

ຜູ້ທີ່ບໍ່ເວົ້າໃຫ້ຄົນອື່ນເສຍຫາຍ ເຂົາບໍ່ເວົ້າຈາໃສ່ຮ້າຍຜູ້ອື່ນລັບຫຼັງ. ວ່າກັນວ່າຜູ້ຮັບໃຊ້ທີ່ ເປັນຄຣິສຕຽນ ຈຳນວນຫຼາຍທີ່ໄດ້ຮັບບາດເຈັບນັ້ນມີບາດແຜທີ່ຫາງຫຼັງ.

ຜູ້ທີ່ບໍ່ເຮັດຜິດຕໍ່ໝູ່ຄູ່ ເຂົາເປັນຄົນມີຄວາມເມດຕາປານີ ແລະຍຸດຕິທຳ.

ຜູ້ທີ່ບໍ່ກ່າວຂ້ອນນິນທາເພື່ອນບ້ານ ຫາກເຈົ້າໄປຫາເຂົາ ແລະ ເລົ່າໃຫ້ເຂົາຟັງເຖິງເລື່ອງບໍ່ດີ ກ່ຽວກັບເພື່ອນຂອງເຂົາ ເຂົາຈະບໍ່ຟັງເຈົ້າ ເຂົາຈະບໍ່ຍອມຮັບໃນເລື່ອງເຫຼົ່ານັ້ນນີ້ເປັນຫນຶ່ງໃນ ປະເດັນທີ່ສຳຄັນທີ່ສຸດຂອງສິນລະທຳຂອງຄຣິສຕຽນ.

ລາວດູຖູກຄົນທີ່ພຣະເຈົ້າປະຕິເສດເຂົາ, ເຂົາບໍ່ຍອມກົ້ມຫົວໃຫ້ກັບຄົນຊົ່ວຊ້ຳບຸກຄົນນັ້ນ ອາດມີຄວາມສຳຄັນຫລາຍທາງການເມືອງ ຫຼືແມ່ນແຕ່ໃນຄຣິສຕະຈັກ ແຕ່ຫາກບຸກຄົນນັ້ນ ຊົ່ວຊ້ຳ ເຂົາຈະຖືກຊາຍຄົນນີ້ດູຫມິ່ນຢຽດຢາມ.

ຜູ້ທີ່ໃຫ້ກຽດຄົນທີ່ຢຳເກງພຣະເຈົ້າຢາເວ ເຂົາສະແດງຄວາມເຄົາລົບຕໍ່ລູກຂອງພຣະເຈົ້າ ທຸກຄົນ ເຂົາປະຕິບັດຕໍ່ຄົນເຫຼົ່ານັ້ນ ດ້ວຍຄວາມເຄົາລົບເຖິງວ່າຄົນເຫຼົ່ານັ້ນອາດຈະເບິ່ງຄືບໍ່ ສຳຄັນກໍຕາມ.

ຜູ້ທີ່ເຮັດຕາມທີ່ຕົນໄດ້ສັນຍາໄວ້ສະເໝີ ເຖິງວ່າຕົນຈະເປັນຝ່າຍເສຍປະໂຫຍດ ກໍ່ຕາມ ເຂົາກໍບໍ່ກັບຄຳຫາກເຂົາໃຫ້ຄຳໝັ້ນສັນຍາ ເຂົາຈະຢຶດໝັ້ນໃນສິ່ງນັ້ນເຖິງວ່າສິ່ງທີ່ ສັນຍາໄວ້ຈະເຮັດໃຫ້ຕົວເອງເສຍຜົນປະໂຫຍດກໍ່ຕາມ.

ຜູ້ທີ່ໃຫ້ຄົນອື່ນກູ້ຢືມເງິນ ໂດຍບໍ່ຄິດດອກເບ້ຍ ເຂົາບໍ່ຄິດດອກເບ້ຍຈາກຄົນທີ່ກູ້ຢືມເງິນ ຈາກເຂົາ

ຜູ້ທີ່ບໍ່ຮັບສິນບົນເປັນພະຍານຕໍ່ສູ້ກັບຄົນບໍ່ມີຄວາມຜິດດ້ວຍ ທ່ານບໍ່ສາມາດໃຊ້ເງິນຊື້ ເຂົາເພື່ອໃຫ້ຕໍ່ສູ້ກັບຜູ້ບໍຣິສຸດໄດ້

ໃນຕອນທ້າຍຂອງຂໍ້ພຣະຄຳພີໄດ້ກ່າວໄວ້ວ່າ: "ຜູ້ທີ່ເຮັດສິ່ງເຫຼົ່ານີ້ຈະບໍ່ຫວັ່ນໄຫວເປັນນິດ" ຄົນປະເພດນີ້ເປັນຄົນທີ່ບໍ່ໄດ້ຫວັ່ນໄຫວງ່າຍໆ ຫາກຜູ້ປົກຄອງທຸກຄົນໃນຄຣິສຕະຈັກ ເປັນເຊັ່ນນັ້ນ ກໍຈະບໍ່ມີບັນຫາໃນຄຣິສຕະຈັກ ຂ້າພະເຈົ້າ ເຊື່ອວ່າສິ່ງເຫຼົ່ານີ້ເປັນເຄື່ອງຫມາຍ ຂອງສິນລະທຳຄຣິສຕຽນ ຫາກເຮົາຝຶກຝົນຕາມສິບປະການຂ້າງເທິງນີ້ ເຮົາກໍສາມາດຈັດການ ວິກິດທາງດ້ານສິນລະທຳໃນຄຣິສຕະຈັກອອກໄປໄດ້.

ໃຫ້ເຮົາມາເບິ່ງໂກໂລຊາຍ 3:3-5 ແລະ ເຈາะເລິກຍິ່ງຂຶ້ນໄປອີກ

> “ດ້ວຍວ່າ, ພວກເຈົ້າໄດ້ຕາຍແລ້ວ
> ແລະຊີວິດຂອງພວກເຈົ້າໄດ້ເຊື່ອງຊ້ອນບັງໄວ້ດ້ວຍ
> ກັນກັບພຣະຄຣິດໃນພຣະເຈົ້າ. ຊີວິດທີ່ແທ້ຈິງຂອງພວກເຈົ້າຄືພຣະຄຣິດ
> ແລະເມື່ອໃດ ພຣະອົງສະເດັດມາປາກົດ ເມື່ອນັ້ນແຫຼະ
> ພວກເຈົ້າກໍຈະໄດ້ມາປາກົດກັບພຣະອົງ ແລະ

> ຮ່ວມໃນສະຫງ່າຣາສີຂອງພຣະອົງ. ເຫດສະນັ້ນ
> ພວກເຈົ້າຕ້ອງປະຫານຕົນຫາຝ່າຍ ໂລກນີ້ທີ່ດຳເນີນການຢູ່ໃນພວກເຈົ້າເຊັ່ນ:
> ການຜິດສິນທຳທາງເພດ, ການຊົ່ວຮ້າຍ, ຣາຄະຕົນຫາ, ຄວາມປາຖະໜາ
> ໃນທາງຊົ່ວຮ້າຍ ແລະ ຄວາມໂລບ ເຊິ່ງເປັນການຂາບໄຫວ້ຮູບເຄົາລົບ.”
> (ພຄສ2015)

ພຣະຄຣິດຊົງເປັນຊີວິດຂອງເຮົາ ເຊິ່ງເປັນຊີວິດທີ່ບໍ່ສາມາດທຳລາຍໄດ້, ບໍ່ສາມາດເຮັດໃຫ້ສູນສິ້ນໄປໄດ້, ບໍ່ສາມາດເອົາຊະນະໄດ້ ແລະຈະຄົງຢູ່ຕໍ່ໄປເປັນນິດ ໂປໂລກ່າວເສີມອີກວ່າ "ບັດນີ້ ຈົ່ງປະຫານຊີວິດທາງໂລກພາຍໃນຕົວທ່ານ" ກ່າວອີກຢ່າງໜຶ່ງຄື:
ທ່ານຕ້ອງເຮັດໃຫ້ສິ່ງເຫຼົ່ານັ້ນຕາຍໄປ
ນີ້ບໍ່ແມ່ນປະສົບການພຽງຄັ້ງດຽວເທົ່ານັ້ນແຕ່ເປັນຊີວິດທີ່ຕ້ອງມີວິໄນຕໍ່ເນື່ອງ.

> “ເຫດສະນັ້ນ,
> ຖ້າຊີວິດໃນພຣະຄຣິດອຳນວຍການຊຸກຳລັງໃຈ,ຖ້າມີຄວາມເລົ້າໂລມ
> ປະການໃດໃນຄວາມຮັກ, ຖ້າມີສ່ວນຮ່ວມໃຈກັບພຣະວິນຍານປະການໃດ,
> ຖ້າມີຄວາມເມດຕາເອັນດູປະການໃດ,
> ກໍຂໍໃຫ້ເຈົ້າທັງຫຼາຍເຮັດໃຫ້ຄວາມຍິນດີ ຂອງເຮົາຄົບເຕັມ
> ດ້ວຍການທີ່ມີຄວາມຄິດຢ່າງດຽວກັນ ມີຄວາມຮັກຢ່າງດຽວ ກັນ
> ມີໃຈຮ່ວມສາມັກຄີເປັນນ້ຳໜຶ່ງໃຈດຽວກັນ. ຢ່າເຮັດສິ່ງໃດໃນທາງຊິງດີ
> ຫຼືຖືດີກັນ, ແຕ່ຈົ່ງຖ່ອມໃຈລົງ ຖືວ່າຄົນອື່ນດີກວ່າຕົນ.” (ພຄສ2015)

ໃນຟີລິບປອຍ 2:1-4 ໂປໂລ ບັນຍາຍເຖິງທັດສະນະຄະຕິຂອງເຮົາວ່າ: ຫາກເຮົາຕ້ອງການຮັກສາຄວາມເປັນນ້ຳໜຶ່ງໃຈດຽວກັນໃນພຣະກາຍຂອງພຣະຄຣິດໄວ້ ໂປໂລໄດ້ໃຊ້ຄຳທີ່ແຕກຕ່າງກັນຫລາຍຄຳ ແຕ່ມີຄຳດຽວທີ່ຄອບຄຸມທັ້ງຫມົດ ນັ້ນຄືຄວາມອ່ອນນ້ອມຖ່ອມຕົວ ແລະນັ້ນຄື ກະແຈສູ່ຄວາມເປັນນ້ຳຫນຶ່ງໃຈດຽວກັນ ສຸພາສິດ13:10 ກ່າວວ່າ "ຄຳຫຍາບຊ້າ ສ້າງແຕ່ເລື່ອງເດືອດຮ້ອນເກາะຜິດ. ການຍອມຝັງຄວາມຄິດເຫັນ
ພາໃຫ້ຕົນເປັນຄົນສະຫຼາດ" ດັ່ງນັ້ນ,
ຈົ່ງເປັນສິ່ງທີ່ສົມເຫດສົມຜົນວ່າສິ່ງທີ່ກົງກັນຂ້າມກັບຄຳຫຍາບຊ້າກໍຄື ການຍອມຮັບຝັງຄວາມຄິດເຫັນ ແລະນີ້ຄືວິທີທີ່ຈະແກ້ບັນຫາຄວາມຂັດແຍ່ງໄດ້.

ພຣະຄຳພີບໍ່ເຄີຍບອກວ່າພຣະເຈົ້າຈະຊົງເຮັດໃຫ້ເຮົາອ່ອນນ້ອມຖ່ອມຕົນ
ພຣະຄຳພີບອກເຮົາ ສະເໝີວ່າໃຫ້ເຮົາຖ່ອມຕົວເຮົາເອງລົງ
ສິ່ງນີ້ບໍ່ແມ່ນສິ່ງທີ່ພຣະເຈົ້າຈະຊົງເຮັດເພື່ອເຮົາ,
ແຕ່ເປັນສິ່ງທີ່ເຮົາຕ້ອງເຮັດເພື່ອຕົວຂອງເຮົາເອງ.

ໂປໂລຍັງກ່າວອີກດ້ວຍວ່າ: ຢ່າປ່ອຍໃຫ້ສິ່ງໜຶ່ງສິ່ງໃດເກີດຂຶ້ນດ້ວຍຄວາມ ທະເຍີທະຍານທີ່ເຫັນແກ່ຕົວ, ຕາມຄວາມຄິດເຫັນຂອງຂ້າພະເຈົ້ານັ້ນ ຄວາມທະເຍີທະຍານທີ່ເຫັນແກ່ຕົວ ຄືບັນຫາດຽວທີ່ຍິ່ງໃຫຍ່ທີ່ສຸດໃນຄຣິສຕະຈັກ.

ຂ້າພະເຈົ້າ ມີເພື່ອນຄົນໜຶ່ງທີ່ເປັນບັນນາທິການ ຂອງວາລະສານກ່ຽວກັບສາສະໜາແຫ່ງໜຶ່ງ ໃນສະຫະລັດອາເມຣິກາ ເມື່ອຫລາຍປີກ່ອນ ຂ້າພະເຈົ້າ ໄດ້ເວົ້າກັບເຂົາວ່າ
"ຫລາຍບົດຄວາມ ໃນວາລະສານຂອງເຈົ້າເປັນບົດຄວາມທີ່ດີ
ແຕ່ຫຼັງຈາກທີ່ຂ້ອຍໄດ້ອ່ານໂຄສະນາແລ້ວ ຂ້ອຍ ຮູ້ສຶກຢາກໄປອາບນ້ຳ
ເພື່ອຊຳລະລ້າງຄວາມຮູ້ສຶກທີ່ບໍ່ດີອອກໄປ ເພາະທຸກຢ່າງ ທີ່ໂຄສະນາ
ລ້ວນແຕ່ເປັນການສົ່ງເສີມ ຫຼືໂປຣໂມດຕົວເອງທັ້ງນັ້ນ."

ນີ້ເປັນເລື່ອງລ່ວນບຸກຄົນ

ສາສະໜາຄຣິດ ເປັນເລື່ອງຂອງຄວາມສຳພັນທີ່ຖືກຕ້ອງເປັນຫຼັກ, ບໍ່ແມ່ນຫຼັກຄຳສອນທີ່ຖືກຕ້ອງ, ຂ່າວປະເສີດບໍ່ແມ່ນຊຸດຂອງກົດເກນຕ່າງໆ ບໍ່ແມ່ນຄຳກ່າວກ່ຽວກັບພຣະເຈົ້າ, ບໍ່ໄດ້ເກີດຈາກການຮູ້ທຸກສິ່ງທຸກຢ່າງກ່ຽວກັບພຣະເຈົ້າ, ຈຸດປະສົງຂອງຂ່າວປະເສີດຄື ຄວາມສຳພັນທີ່ຖືກຕ້ອງກັບພຣະເຈົ້າ ການເທດສະໜາຂ່າວປະເສີດໃດໆ ທີ່ບໍ່ກໍ່ໃຫ້ເກີດ ຄວາມສຳພັນທີ່ຖືກຕ້ອງກັບພຣະເຈົ້າກໍຄືຄວາມຫາຍຍະນະນັ້ນເອງ.

ໃນມັດທາຍ 18:15-17 ພຣະເຢຊູຊົງຕຣັດກ່ຽວກັບວິທີການຮັກສາຄວາມສຳພັນທີ່ຖືກຕ້ອງ ກັບຜູ້ອື່ນໄວ້ວ່າ:

> “ຖ້າພີ່ນ້ອງຂອງເຈົ້າ ເຮັດບາບຕໍ່ສູ້ເຈົ້າຈົ່ງໄປຕັກເຕືອນລາວໃຫ້ຮູ້ຄວາມຜິດ
> ດ້ວຍຕົນເອງກັບລາວເທົ່ານັ້ນ ຖ້າລາວຍອມຟັງເຈົ້າກໍ່ໄດ້ພີ່ນ້ອງຄືນມາ.
> ແຕ່ຖ້າລາວບໍ່ຟັງເຈົ້າ ຈົ່ງຈົ່ງນຳເອົາຄົນໜຶ່ງ ຫຼືສອງຄົນໄປກັບເຈົ້າ ເພື່ອໃຫ້
> ເປັນພະຍານສອງ ຫຼືສາມປາກ
> ເພື່ອວ່າທຸກໆຖ້ອຍຄຳນັ້ນຈະລວມເປັນຫຼັກຖານ. ແຕ່ຖ້າລາວບໍ່ຟັງຄົນເຫຼົ່ານີ້
> ຈົ່ງໄປແຈ້ງເລື່ອງທັງໝົດຕໍ່ຄຣິສຕະຈັກ ແລະ ຖ້າລາວບໍ່ຟັງຄຣິສຕະຈັກ
> ກໍ່ໃຫ້ຖືວ່າຄົນນີ້ເປັນເໝືອນຄົນບໍ່ເຊື່ອພຣະເຈົ້າ ແລະເປັນ
> ເໝືອນຄົນເກັບພາສີ.”

ດັ່ງນັ້ນ, ຈຶ່ງມີສາມຂັ້ນຕອນທີ່ກ່ຽວຂ້ອງຄື:
ເຈົ້າໄປຫາພີ່ນ້ອງຄົນນັ້ນຕົວຕໍ່ຕົວຫາກເຈົ້າສາມາດ ຈັດການໄດ້ດ້ວຍຕົວຂອງເຈົ້າເອງ
ເຈົ້າກໍບໍ່ຈຳເປັນຕ້ອງເຮັດສິ່ງໃດຕໍ່ໄປອີກ ແຕ່ຖ້າຫາກ ຕົກລົງກັນບໍ່ໄດ້
ກໍໃຫ້ຫາພະຍານທີ່ເຊື່ອຖືໄດ້ຈັກສອງສາມຄົນ ເພື່ອບັນທຶກ ເລື່ອງທີ່ໄດ້ປຶກສາ ຫາລືກັນ
ຫາກຍັງບໍ່ສາມາດຕົກລົງກັນໄດ້ ກໍ່ໃຫ້ນຳເລື່ອງນັ້ນແຈ້ງຕໍ່ຫນ້າ ຄຣິສຕະຈັກ ແລະ
ບໍ່ວ່າຄຣິສຕະຈັກ ຈະຕັດສິນຢ່າງໃດກໍ່ຕ້ອງປະຕິບັດຕາມນັ້ນ ຫາກເຂົາຍັງບໍ່ຟັງ ຄຣິສຕະຈັກ
ກໍຢ່າປະຕິບັດຕໍ່ເຂົາ ໃນຖານະຜູ້ເຊື່ອອີກຕໍ່ໄປ ເພາະເຂົາ ໄດ້ສູນເສຍສິດທີ່ຈະໄດ້ຊື່ວ່າ
ເປັນຜູ້ເຊື່ອໄປແລ້ວ.

ສິ່ງນັ້ນ (ໝາຍເຖິງ ການຕັດສິນຂອງຄຣິສຕະຈັກ-ຜູ້ແປ)
ເຮັດໃຫ້ຄຣິສຕະຈັກມີຄວາມສຳຄັນ ຫລາຍ
ຂ້າພະເຈົ້າມັກຈະສົງໄສວ່າມີຄຣິສຕະຈັກແຫ່ງໃດແດ່ ທີ່ຢູ່ໃນສະຖານະທີ່ຈະປະຕິບັດ
ແບບນັ້ນໄດ້, ທັ້ງນີ້ພຣະເຍຊູໄດ້ຊົງຕຣັດຕໍ່ໄປໃນຂໍ້19 ແລະ 20 ວ່າ:

> “ ເຮົາບອກພວກເຈົ້າອີກວ່າ
> ເມື່ອໃດສອງຄົນໃນພວກເຈົ້າຮ່ວມໃຈກັນຂໍສິ່ງໃດສິ່ງຫນຶ່ງ
> ເທິງແຜ່ນດິນໂລກນີ້
> ພຣະບິດາເຈົ້າຂອງເຮົາຜູ້ຊົງສະຖິດໃນສະຫວັນຈະເຮັດໃຫ້ ເປັນໄປຕາມນັ້ນ.
> ດ້ວຍວ່າ ມີສອງ ຫຼືສາມຄົນມາຮ່ວມປະຊຸມໃນນາມເຮົາຢູ່ບ່ອນໃດ

ເຮົາກໍຢູ່ທ່າມກາງພວກເຂົາໃນບ່ອນນັ້ນແຫຼະ.”(ພຄສ2015)

ໃນພາສາກຣີກຄຳວ່າ "ຄິດເຫັນຕົງກັນ" ເປັນຄຳສັບທາງດ້ານດົນຕີ ແລະເປັນທີ່ມາຂອງຄຳວ່າ "ຊິມໂຟນີ" (ໝາຍເຖິງດົນຕີປະສານສຽງວົງໃຫຍ່-ຜູ້ແປ)
ຄຳດັ່ງກ່າວບັນຍາຍເຖິງຄວາມປະສົມ ກົມກືນກັນ ແລະພຣະເຢຊູຊົງຕຣັດວ່າ: "
ຖ້າພວກທ່ານສອງຄົນ ຈະຮ່ວມໃຈກັນທູນຂໍສິ່ງໃດ ສິ່ງໜຶ່ງໃນໂລກ
ພຣະບິດາຂອງເຮົາຜູ້ຊົງສະຫິດໃນສະຫວັນ ກໍຈະຊົງກະທຳສິ່ງນັ້ນໃຫ້
"ຂ້າພະເຈົ້າບໍ່ແມ່ນນັກດົນຕີ ແຕ່ຮູ້ວ່າການທີ່ໄດ້ຍິນດົນຕີທີ່ເກືອບຈະປະສານເຂົ້າກັນໄດ້ນັ້ນ
ມັນເປັນຫຍັງທີ່ທໍລະມານຫລາຍ, ຂ້າພະເຈົ້າ ເຫັນຄວາມສຳພັນແບບຄຣິສຕຽນຫຼວງຫຼາຍ
ທີ່ເກືອບຈະເປັນນ້ຳໜຶ່ງໃຈດຽວກັນ ແລະຂ້າພະເຈົ້າຄິດວ່າ
ພຣະເຈົ້າກໍຄົງຈະຊົງປົດພຣະກັນ ຂອງພຣະອົງໃນສະຫວັນເໝືອນກັນ.

ທ່ານອາດສັງເກດເຫັນວ່າຂ້າພະເຈົ້າຂ້າມຂໍ້ 18 ໄປ ໃຫ້ເຮົາມາພິຈາລະນານຳກັນ.

> “ດັ່ງນັ້ນ, ເຮົາຈຶ່ງບອກພວກເຈົ້າ
> ຕາມຄວາມຈິງວ່າສິ່ງໃດທີ່ພວກເຈົ້າຈະຜູກມັດ ໄວ້ເທິງແຜ່ນດິນໂລກນີ້
> ສິ່ງນັ້ນກໍຈະຜູກມັດໄວ້ໃນສະຫວັນ ແລະ ສິ່ງໃດທີ່
> ພວກເຈົ້າແກ້ໃນແຜ່ນດິນໂລກນີ້ ສິ່ງນັ້ນ ກໍຈະຖືກແກ້ໃຫ້ຫຼຸດເສຍແລ້ວ
> ໃນສະຫວັນເໝືອນກັນ.”

ນັ້ນເປັນສິດອຳນາດທີ່ຍິ່ງໃຫຍ່ຫລາຍ! ໃນແງ່ໜຶ່ງນັ້ນ ສິດອຳນາດແຫ່ງສະຫວັນຖືກມອບໄວ້ໃຫ້ກັບເຮົາແລ້ວໃນຖານະຜູ້ເຊື່ອ ແຕ່ໃຫ້ເຮົາສັງເກດວ່າ ເຮົາຕ່າງຫາກທີ່ຕ້ອງລົງມືເຮັດເອງ ຂ້າພະເຈົ້າມັກໄດ້ຍິນ ຄຣິສຕຽນອະທິຖານຂໍໃຫ້ພຣະເຈົ້າຊົງຜູກມັດ ຫຼືຊົງປົດປ່ອຍບາງສິ່ງອອກໄປ ແຕ່ນັ້ນບໍ່ແມ່ນສິ່ງທີ່ພຣະຄຳພີໄດ້ກ່າວໄວ້ພຣະເຈົ້າຊົງຕຣັດວ່າ: "ເຈົ້າຈົ່ງຜູກມັດມັນໃນນາມຂອງເຮົາ" ມັນຂຶ້ນຢູ່ກັບເຮົາທີ່ຈະມີຄວາມເຊື່ອ ແລະຄວາມກ້າທີ່ຈະເຮັດສິ່ງນັ້ນຫຼືບໍ່ ສະນັ້ນເມື່ອເຮົາຜູກມັດສິ່ງໃດໃນໂລກ ສິ່ງນັ້ນກໍຜູກມັດໃນສະຫວັນແລ້ວ.

ຫຼາຍປີຜ່ານມາ ຂ້າພະເຈົ້າເຫັນຜູ້ຮັບໃຊ້ທີ່ເປັນຄຣິສຕຽນຫຼາຍທ່ານທີ່ຮູ້ສຶກບໍ່ໝັ້ນຄົງ ເພາະຄວາມຫມັ້ນຄົງຂອງພວກເຂົາຂຶ້ນຢູ່ກັບຄວາມສຳເລັດ, ແຕ່ຂ້າພະເຈົ້າມີມຸມມອງຊີວິດທີ່ແຕກຕ່າງຈາກສິ່ງນັ້ນໂດຍສິ້ນເຊີງ, ສຳລັບຂ້າພະເຈົ້ານັ້ນຄວາມສຳເລັດຄື ການກະທຳໃຫ້ພຣະບິດາພໍພຣະໄທ ແລະຄວາມໝັ້ນຄົງກໍຄື ການທີ່ໄດ້ຮູ້ວ່າຂ້າພະເຈົ້າໄດ້ຮັບຄວາມຮັກຈາກພຣະບິດາ, ຂ້າພະເຈົ້າເຊື່ອວ່າສິ່ງນັ້ນຄື ສິ່ງທີ່ພຣະກິດຕິຄຸນມຸ້ງຫມາຍທີ່ຈະກະທຳໃຫ້ເກີດຂຶ້ນ
ຖ້າຫາກວ່າ
ສິດຍາພິບານທຸກຄົນໃນເມືອງມີຈຸດປະສົງຫລັກເພື່ອເຮັດໃຫ້ພຣະບິດາພໍພຣະໄທ
ກໍຈະບໍ່ມີການຊິງດີຊິງເດັ່ນ ແລະບໍ່ມີການແຂ່ງຂັນເຊິ່ງກັນ ແລະກັນເລີຍ.

ຂ້າພະເຈົ້າເຊື່ອວ່າ: ນັ້ນຄືວິທີທີ່ພຣະເຈົ້າຕ້ອງການໃຫ້ເຮົາດຳເນີນຊີວິດ
ແລະຂ້າພະເຈົ້າເຊື່ອວ່າ ນີ້ຄືຄຳຕອບສຳລັບຄຳຖາມວ່າດ້ວຍເລື່ອງ
ຈັນຍາບັນຄຣິສຕຽນຫາກເຮົາມີສຳພັນທີ່ຖືກຕ້ອງ ກັບພຣະບິດາແລ້ວ
ຄວາມສຳພັນອື່ນໆທັ້ງໝົດກໍຈະລົງຕົວຕາມໄປດ້ວຍ.



ປຶ້ມຄຳສອນ

ໃຫ້ຄວາມຈະແຈ້ງ ແລະ ຂະຫຍາຍຄວາມເຂົ້າໃຈ ຂອງທ່ານກ່ຽວກັບ ພຣະຄຳພີ ດ້ວຍ collection ປຶ້ມຄຳສອນ ຄລິດສະຕຽນ ຂອງ ອາຈານ ເດເຣັກ ປຶ້ຣນຊ



ການເຝົ້າດ່ຽວ ປະຈຳວັນ

ຄົ້ນຫາ ບົດເຝົ້າດ່ຽວປະຈຳວັນ ທີ່ສ້າງ ແຮງບັນດານໃຈຕາມຫຼັກການ ພຣະຄຳພີ ໂດຍຄຳ ສອນພາກປະຕິບັດ ຂອງ ອາຈານ ເດເຣັກ ປຶ້ຣນຊ ເພື່ອຍົກລະດັບ ຄວາມເຊື່ອ ຄຣິດສະຕຽນ ຂອງທ່ານໄດ້ຝຶ້ຣ.



ລາຍການວິທະຍຸ ທີ່ເປັນມໍລະດົກ

ຮັບຟັງຖ້ອຍຄຳ ທີ່ສ້າງແຮງບັນດານໃຈ 10 ນາທີ ແລະ ເຊື່ອມຕໍ່ ຄວາມເຊື່ອ ເຂົ້າກັບຊີວິດ ຜ່ານ podcast ເຊິ່ງເປັນມໍລະດົກ ຂອງອາຈານ ເດເຣັກ ປຶ້ຣນຊ



ຄຳເທດສະໜາ

ຮັບຊົມ ຄຳເທດສະໜາ ເຊິ່ງເປັນຕົ້ນສະບັບ ທີ່ທຳສຳເນົາຂຶ້ນໃຫມ່ ໃນລະບົບ ດີຈີຕ້ອນ ໂດຍ ອາຈານ ເດເຣັກ ປຶ້ຣນຊ ລວມທັງຂໍ້ຄວາມ ຖອດສຽງ ສະບັບເຕັມ (ດາວໂຫຼດຝຶ້ຣ)



ແອັບທີ່ເປັນທາງການ

ດາວໂຫຼດ ແອັບທີ່ເປັນທາງການ ຂອງພັນທະກິດ ເດເຣັກ ປຶ້ຣນ ໄດ້ຝຶ້ຣ ເພື່ອເສີມສ້າງຄວາມເຊື່ອຂອງ ທ່ານໄດ້ທຸກທີ່ ທຸກເວລາ



ການປ່າວປະກາດ

ປ່າວປະກາດຊີວິດ ແລະ ພິບກັບປະສົບການ ໃນລິດອຳນາດຂອງຖ້ອຍຄຳ ພຣະເຈົ້າ ທີ່ ສາມາດປ່ຽນແປງຊີວິດໄດ້ ໂດຍຄຳປ່າວປະກາດຂອງເຮົາ ທີ່ຂຽນຕາມຫຼັກການຂອງ ພຣະຄຳພີ

ລິຂະສິດ © 2005 ພັນທະກິດ ເດເຣັກ ປຶ້ຣນຊ